# Medi-Cal Managed Care ໄດ້ມີການປ່ຽນແປງໃນເດືອນ ມັງກອນ 2023 ສຳລັບຜູ້ທີ່ມີສິດ (Medi-Medi) ໄດ້ຮັບຜົນປະໂຫຍດທັງສອງ




+




ໃນວັນທີ່ 1 ມັງກອນ, 2023 , Medi-Cal ການປ້ອງກັນສຸຂະພາບໃນບາງເຂດຈະປ່ຽນຊື່ຈາກ Fee-For-Service (FFS) Medi-Cal ໄປເປັນ Medi-Cal Managed Care. ບັນດາແຈ້ງການຈະຖືກສົ່ງໄປໃນວັນທີ່ 1 ພະຈິກ ແລະ ວັນທີ່ 1 ທັນວາ 2022. **ບັນດາຜູ້ໃຫ້ບໍລິການ ແລະ ຜົນປະໂຫຍດໃນ Medicare ຂອງທ່ານອາດຈະບໍ່ປ່ຽນແປງ**.

ສຳລັບບຸກຄົນທີ່ໄດ້ຮັບການປົກປ້ອງຈາກທັງສອງນະໂຍບາຍ Medicare ແລະ Medi-Cal, Medi-Cal ຈະປ່ຽນເປັນ Medi-Cal ໄດ້ຄວບຄຸມການດູແລ ໃນເຂດທີ່ໄດ້ລະບຸລຸ່ມນີ້. ທັງໝົດໃນເຂດອື່ນ, Medi-Cal ແມ່ນໄດ້ໃຫ້ບໍລິການຜ່ານແຜນການຈັດການດູແລຂອງ Medi-Cal:

> Alameda, Alpine, Amador, Butte, Calaveras, Colusa, Contra Costa, El Dorado, Fresno, Glenn, Imperial, Inyo, Kern, Kings, Madera, Mariposa, Mono, Nevada, Placer, Plumas, Sacramento, San Benito, San Francisco, San Joaquin, Sierra, Stanislaus, Sutter, Tehama, Tuolumne, Tulare, ແລະ Yuba ເຂດ.

## ການເຂົ້າຮ່ວມແຜນ Medi-Cal Managed Care ຈະບໍ່ປ່ຽນປະໂຫຍດ Medicare ຂອງທ່ານ

ຜົນປະໂຫຍດຂອງທ່ານໃນ Medicare ອາດຈະບໍ່ປ່ຽນພາຍຫຼັງທ່ານເຂົ້າຮ່ວມແຜນຂອງ Medi-Cal. ການເຂົ້າຮ່ວມ Medi-Cal ແຜນຈະບໍ່ມີຜົນກະທົບຕໍ່ບັນດາຜູ້ໃຫ້ບໍລິການຂອງທ່ານໃນ Medicare ຫຼື ການເລືອກແຜນຂອງ Medicare Advantage ຫຼື Medicare ເກົ່າຂອງທ່ານ. ບັນດາຜູ້ໃຫ້ບໍລິການຂອງ Medicare ບໍ່ຈຳເປັນຕ້ອງຢູ່ໃນເຄືອຄ່າຍຂອງແຜນ Medi-Cal ເພື່ອສືບຕໍ່ໃຫ້ການເບິ່ງແຍງດູແລໃຫ້ທ່ານອີກຕໍ່ໄປ. ທ່ານຍັງສາມາດໄປພົບ Medicare ຜູ້ໃຫ້ບໍລິການຂອງທ່ານ ແລະ ໄປທີ່ໂຮງໝໍບ່ອນທີ່ພົບໄດ້ທ່ານໝໍ Medicare ຂອງທ່ານ

## ການເລືອກແຜນ Medi-Cal Managed Care

ການເລືອກແຜນ Medi-Cal ຂອງທ່ານແມ່ນຂຶ້ນກັບເຂດທີ່ທ່ານອາໄສຢູ່, ແລະ ບໍ່ວ່າທ່ານຈະຢູ່ໃນແຜນຂອງ Medicare Advantage ຫຼື ບໍ່ ຮຽນຮູ້ເພີ່ມເຕີມກ່ຽວກັບການເລືອກໄປທີ່ Health Care Options (HCO) ຫຼື ໂທຫາເບີ 1-800-430-4091.

## ແຜນ Medi-Cal Managed Care ແມ່ນຫຍັງ?

ແຜນ Medi-Cal ແມ່ນໜຶ່ງໃນແຜນການເບິ່ງແຍງດູແລສຸຂະພາບທີ່ໄດ້ເຮັດວຽກ ຮ່ວມກັບບັນດາຜົນປະໂຫຍດທັງໝົດໃນ Medi-Cal ຂອງທ່ານ. ແຜນ Medi-Cal ສາມາດໃຫ້ຜົນປະໂຫຍດພິເສດແກ່ທ່ານພ້ອມກັບບັນດາຜົນປະໂຫຍດໃນ Medicare ຂອງທ່ານ. ບັນດາຜົນປະໂຫຍດຂອງ Medi-Cal ລວມມີ:

- ການປະສານງານຂອງ ການບໍລິການ ແລະ ການສະໜັກສະໜູນ (Long-Term Services and Supports) ໃນໄລຍະຍາວທີ່ທ່ານຕ້ອງໃຊ້ ຫຼື ຕ້ອງການ
- ການເດີນທາງໄປ ແລະ ກັບຈາກບັນດາການນັດພົບທ່ານໝໍ
- ອຸປະກອນທາງການແພດແບບພິເສດ ແລະ ເຄື່ອງມືເພື່ອຊ່ວຍຈັດການສຸຂະພາບຂອງທ່ານ
- ການຈັດການເພື່ອປັບປຸງການດູແລ (Enhanced Care Management) ແລະ ການຊ່ວຍເຫຼືອຂອງຊຸມຊົນ (Community Supports) ເພື່ອຊ່ວຍເຕືອນໃຫ້ທ່ານຢູ່ໃນເຮືອນໄດ້ຢ່າງປອດໄພ

ພາຍຫຼັງໄດ້ເຂົ້າຮ່ວມແຜນ Medi-Cal, ທ່ານຍັງສາມາດເຂົ້າຮ່ວມບາງບໍລິການຂອງ Medi-Cal ໂດຍຜ່ານຕົວແທນອື່ນໆ, ເຊິ່ງລວມມີ:

- In-Home Supportive Services (IHSS)
- ບໍລິການດູແລສຸຂະພາບຈິດແບບພິເສດ ແລະ ການປິ່ນປົວບັນຫານໍາໃຊ້ສານເສບຕິດ
- ການບໍລິການດ້ານທັນຕະກໍາຂອງ Medi-Cal
- ສູນບໍລິການໃນພາກພື້ນ
- ມີຫຼາຍບໍລິການຮ້ານຂາຍຢາຂອງ Medi-Cal

## ການເຂົ້າຮ່ວມແຜນ Medi-Cal Managed Care ຈະບໍ່ປ່ຽນ IHSS ຂອງທ່ານ ຫຼື ການສະໜັກສະໜູນອື່ນໆ

ບັນດາຜົນປະໂຫຍດລຸ່ມນີ້ຂອງ Medi-Cal ຈະບໍ່ປ່ຽນເມື່ອທ່ານເຂົ້າຮ່ວມແຜນຂອງ Medi-Cal:

- In-Home Supportive Services (IHSS)
- Community-Based Adult Services (CBAS)
- Multipurpose Senior Services Program (MSSP)
- ສະຖານທີ່ໃຫ້ບໍລິການທາງພະຍາບານ

## ແຫຼ່ງຂໍ້ມູນເພີ່ມເຕີມ

- ສໍາລັບຂໍ້ມູນເພີ່ມເຕີມໃນການເລືອກແຜນຂອງ Medi-Cal ໃນເຂດຂອງທ່ານ, ໄປທີ່ Health Care Options ຫຼື ໂທຫາເບີ 1-800-430-4091
- ສໍາລັບທາງເລືອກການປຶກສາຟຣີ ຂອງ Medicare, ຕິດຕໍ່ທີ່ Health Insurance Counseling and Advocacy Program (HICAP): 1-800-434-0222
- ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫຼືອທີ່ແຜນປະກັນສຸຂະພາບຂອງທ່ານບໍ່ໄດ້ແກ້ໄຂ, ໂທຫາ Medicare Medi-Cal Ombudsman: 1-855-501-3077
- ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບຈັດການການດູແລ ຂອງ Medi-Cal ທີ່ໄດ້ການປ່ຽນແປງ, ກະລຸນາໄປທີ່ໜ້າຂອງເວັບທີ່ California Department of Health Care Services: Statewide Medi-Cal Managed Care Enrollment for Dual Eligible Beneficiaries